ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

3799

ເລກທີ ສສກ.ສດ.2013

ນະຄອນຫຼວງວຽງຈັນ, ວັນທີ 09 SEP 2013

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການຮັບຮອງ ແລະ ອະນຸມັດນຳໃຊ້ຫຼັກສູດສ້າງຄູມັດທະຍົມ**

**ລະດັບປະລິນຍາຕີ (ສອນໄດ້ ແຕ່ ມ1-ມ7) ລະບົບ 12+4**

ອີງຕາມ : ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011.

ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍມາດຕະຖານຫຼັກສູດແຫ່ງຊາດລະດັບປະລິນຍາຕີສະບັບເລກທີ 4132/ສສ.ຊສ/2011, ລົງວັນທີ 03 ພະຈິກ 2011.

ອີງຕາມ : ການສະເໜີຂອງກົມສ້າງຄູ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາຈຶ່ງຕົກລົງ :**

ມາດຕາ 1 : ຮັບຮອງ ແລະ ອະນຸມັດໃຫ້ຄະນະສຶກສາສາດ(ມະຫາວິທະຍາໄລແຫ່ງຕ່າງໆ) ແລະ ວິທະຍາໄລຄູທີ່ມີຄວາມພ້ອມ ທົດລອງນຳໃຊ້ຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີ ລະບົບ 12+4 ເລີ່ມແຕ່ສົກຮຽນ 2013 – 2014 ເປັນຕົ້ນໄປ; ມີ 15 ສາຍວິຊາ ດັ່ງລຸ່ມນີ້:

1. ສາຍວິຊາຄູ ຄະນິດສາດ
2. ສາຍວິຊາຄູ ຟີຊິກສາດ
3. ສາຍວິຊາຄູ ເຄມີສາດ
4. ສາຍວິຊາຄູ ຊີວະສາດ
5. ສາຍວິຊາຄູ ພູມສາດ
6. ສາຍວິຊາຄູ ປະຫວັດສາດ
7. ສາຍວິຊາຄູ ພາສາລາວ-ວັນນະຄະດີ
8. ສາຍວິຊາຄູ ວິທະຍາສາດການເມືອງ
9. ສາຍວິຊາຄູ ພາສາຝຣັ່ງ
10. ສາຍວິຊາຄູ ພາສາອັງກິດ
11. ສາຍວິຊາຄູ ພະລະສຶກສາ
12. ສາຍວິຊາຄູ ສິລະປະສຶກສາ
13. ສາຍວິຊາຄູ ຈິດຕະວິທະຍາການສຶກສາ
14. ສາຍວິຊາຄູ ບໍລິຫານການສຶກສາ
15. ສາຍວິຊາຄູ ICT - ພື້ນຖານວິຊາຊີບ

ມາດຕາ 2 : ໃຫ້ສະຖາບັນທີ່ມີຄວາມພ້ອມຮັບນັກສຶກສາລຸ້ນທີ 1 ຕາມແຜນຮັບຂອງກະຊວງ, ພາຍຫຼັງປະຕິບັດຫຼັກສູດດັ່ງກ່າວໄດ້ 1 ສົກຮຽນ ຈຶ່ງພິຈາລະນາຮັບນັກສຶກສາລຸ້ນຕໍ່ໄປ.

ມາດຕາ 3: ມອບໃຫ້ຄະນະບໍດີຄະນະສຶກສາສາດ ແລະ ຜູ້ອຳນວຍການວິທະຍາໄລຄູທີ່ຖືກມອບໝາຍ ຈັດຕັ້ງປະຕິບັດຫຼັກສູດດັ່ງກ່າວ ໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ກົມສ້າງຄູຊາບໃນແຕ່ລະສົກຮຽນ.

ມາດຕາ 4: ມອບໃຫ້ຫ້ອງການ, ກົມຈັດຕັ້ງ ແລະ ພະນັກງານ, ກົມສ້າງຄູ ແລະ ພາກສ່ວນທີ່ກ່ຽວຂ້ອງຕິດຕາມ, ກວດກາ, ປະເມີນຜົນການປະຕິບັດຫຼັກສູດດັ່ງກ່າວໃຫ້ມີປະສິດທິຜົນ ແລະ ຮັບປະກັນຄຸນນະພາບ.

ມາດຕາ 5 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນນີ້ເປັນຕົ້ນໄປ.

ຈ/. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ບ່ອນສົ່ງ :
- ຫ້ອງການກະຊວງສຶກສາທິການແລະກິລາ 2ສະບັບ
- ກົມສ້າງຄູ 1 ສະບັບ
- ຄະນະສຶກສາສາດໃນທົ່ວປະເທດ, ແຫ່ງລະ 1 ສະບັບ
- ວິທະຍາໄລຄູ, ແຫ່ງລະ 1 ສະບັບ
- ພະແນກສຶກສາທິການແລະກິລາແຂວງ, ແຫ່ງລະ 1 ສະບັບ
- ເກັບມ້ຽນ 1 ສະບັບ
- ກະຊວງພາຍໃນ 1 ສະບັບ

ຮສ.ດຣ.ກອງສີ ແສງມະນີ